ສາທາລະນະລັດປະຊາທິປະໄຕປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

=====000=====

ກະຊວງສາທາລະນະສຸກ

ກອງເລຂາຄະນະກຳມະການປະສານງານ

ກອງທຶນໂລກຕ້ານເອດ, ວັນນະໂຣກ ແລະ ໄຂ້ຍຸງ

ສປປ ລາວ

# ບົດບັນທຶກກອງປະຊຸມຄະນະກຳມະການປະສານງານກອງທຶນໂລກ ຄັ້ງທີ 01 - ສົກປີ 2019-2020

ກອງປະຊຸມຄະນະກຳມະການປະສານງານກອງທຶນໂລກ (CCM) ປົກກະຕິແມ່ນໄດ້ຈັດຂຶ້ນທຸກໆ 3 ເດືອນ ເພື່ອປຶກສາຫາລື, ຮັບຟັງການລາຍງານຄວາມຄືບໜ້າ ຂອງການຈັດຕັ້ງປະຕິບັດເງິນຊ່ວຍເຫຼືອຂອງກອງທຶນໂລກໃນຮອບປະຈຸບັນ, ການຮັບຮອງ, ແລະ ການຕັດສິນບັນຫາຕ່າງໆກ່ຽວກັບການຈັດຕັ້ງປະຕິບັດ ວຽກງານໂຄງການຂອງກອງທຶນໂລກ. ກອງປະຊຸມຄັ້ງນີ້ ໄດ້ຈັດຂຶ້ນເປັນຄັ້ງທີ 01 ຂອງສົກປີ 2019-2020 ໂດຍການເປັນປະທານຂອງທ່ານ ຮສ. ດຣ. ພູທອນ ເມືອງປາກ, ຮອງລັດຖະມົນຕີກະຊວງສາທາລະນະສຸກ ທັງເປັນປະທານຄະນະກຳມະການປະສານງານກອງທຶນໂລກ.

**ວັນເວລາ:** ວັນພະຫັດ, ທີ 06 ກຸມພາ 2020, ເວລາ 13:30 ເຖິງ 16:30.

**ສະຖານທີ່**: ຫ້ອງປະຊຸມຊັ້ນ 3 ກະຊວງສາທາລະນະສຸກ.

**ຜູ້ເຂົ້າຮ່ວມ**: ສະມາຊິກສົມບູນ ແລະ ສຳຮອງຂອງ CCM ຈຳນວນ 17 ທ່ານ (ມີສິດອອກສຽງໄດ້ 16 ທ່ານ), ພາກສ່ວນອື່ນໆ ຈຳນວນ 13 ທ່ານ, ກອງເລຂາ CCM ຈຳນວນ 03 ທ່ານ ລວມທັງໝົດ 33 ທ່ານ.

## I. ວາລະກອງປະຊຸມ:

1. ທົບທວນແລະພິຈາລະນາເພື່ອຮັບຮອງເອົາຜົນການປະເມີນໃນການຈັດຕັ້ງປະຕິບັດຂອງ CCM ຕາມເງື່ອນໄຂຂອງກອງທຶນໂລກ (EPA) ແລະ ແຜນປັບປຸງ;
2. ປະເມີນການຈັດຕັ້ງປະຕິບັດວຽກງານປະຈຳປີໂດຍລວມຂອງ ກອງເລຂາ CCM;
3. ທົບທວນແລະພິຈາລະນາເພື່ອຮັບຮອງເອົາຜົນການຄັດເລືອກຜູ້ຮັບທຶນຕົ້ນຕໍ (PR) ເພື່ອຈັດຕັ້ງປະຕິບັດທຶນຊ່ວຍເຫຼືອຈາກກອງທຶນໂລກຮອບໃໝ່ ຂອງ 3 ແຜນງານ (ເອດ, ວັນນະໂລກ ແລະ ໄຂ້ຍຸງ), ຊຶ່ງລວມມີການສະເໜີເຈດຈຳນົງຂອງ PR ປະຈຸບັນ ແລະ ເອກະສານທີ່ກ່ຽວຂ້ອງຕ່າງໆ;
4. ບັນຫາອື່ນໆ ໂດຍຕາງໜ້າກົມແຜນການແລະການຮ່ວມມືຈະສະເໜີຜົນໄດ້ຮັບໃນໄລຍະຍາວຂອງການລົງທຶນໃສ່ການເສີມສ້າງຄວາມເຂັ້ມແຂງດ້ານສາທາລະນະສຸກ (RSSH) ແລະ ບົດສະເໜີເພື່ອສືບຕໍ່ລົງທຶນໃສ່ RSSH ໃນຮອບທຶນຊ່ວຍເຫຼືອຕໍ່ໄປ ແລະ ປິດກອງປະຊຸມ.

## II. ການສະຫຼຸບສັງລວມໂດຍຫຍໍ້ກ່ຽວກັບຜົນຂອງການປຶກສາຫາລືໃນກອງປະຊຸມ

ກ່ອນຈະເລີ່ມເຂົ້າວາລະກອງປະຊຸມຄັ້ງນີ້ ກອງເລຂາ CCM ໄດ້ສະເໜີຄວາມຄືບໜ້າຂອງການຕິດຕາມການຈັດຕັ້ງປະຕິບັດໜ້າວຽກທີ່ໄດ້ກຳນົດໃນກອງປະຊຸມ CCM ທີ່ຜ່ານມາຄັ້ງ ວັນທີ 27 ກັນຍາ 2019

### 1. ທົບທວນແລະພິຈາລະນາເພື່ອຮັບຮອງເອົາຜົນການປະເມີນໃນການການຈັດຕັ້ງປະຕິບັດຂອງ CCM ຕາມເງື່ອນໄຂຂອງກອງທຶນໂລກ (EPA) ແລະ ແຜນປັບປຸງ

ກອງເລຂາ CCM ໄດ້ນຳສະເໜີ ແລະ ຍົກໃຫ້ເຫັນຂໍ້ມູນ ແລະ ຜົນສຳເລັດຂອງການປະເມີນ CCM (EPA):

- ເພື່ອໃຫ້ມີສິດໄດ້ຮັບທຶນຊ່ວຍເຫຼືອຈາກກອງທຶນໂລກ, CCM ຕ້ອງໄດ້ປະຕິບັດໃຫ້ສຳເລັດ 6 ເງື່ອນໄຂ. ກອງເລຂາກອງທຶນໂລກຈະດຳເນີນການປະເມີນຜົນການປະຕິບັດເງື່ອນໄຂຂອງ CCM ດ້ວຍສອງວິທີ ໃນນັ້ນ ສຳລັບ CCM ສປປ ລາວ, ໄດ້ຖືກສະເໜີໃຫ້ມີການປະເມີນແບບ Light EPA ເຊິ່ງແມ່ນການປະເມີນແບບງ່າຍດາຍ ແລະ ຫຼັງຈາກການປະເມີນຜົນ EPA ແລ້ວຈະຕ້ອງໄດ້ສົ່ງໃຫ້ກອງທຶນໂລກ ພາຍໃນວັນທີ 14 ກຸມພາ 2020;
- ອີງໃສ່ການປະເມີນແຕ່ລະເງື່ອນໄຂ (ER) ແລະ ມາດຕະຖານທີ່ຕໍ່າສຸດ (MS) ຂອງ CCM ສປປ ລາວ ໃນຊຸມປີທີ່ຜ່ານມາ, ຕົວຊີ້ວັດທັງສອງເງື່ອນໄຂຂອງ ER ແລະ MS ຈາກຂໍ້ 3-5 ໄດ້ບັນລຸຢ່າງຄົບຖ້ວນ. ສຳລັບເງື່ອນໄຂຂໍ້ 6, CCM ສປປ ລາວ ໄດ້ບັນລຸຕົວຊີ້ວັດເກືອບທັງໝົດ, ຍົກເວັ້ນແຕ່ຂໍ້ 4 ຊຶ່ງເປັນຕົວຊີ້ວັດເພີ່ມເຂົ້າມາໃໝ່ທີ່ກ່ຽວຂ້ອງກັບຫຼັກຈັນຍາບັນຊຶ່ງບໍ່ສາມາດບັນລຸໄດ້ເທື່ອ;
- ໃນເວລານີ້, ກອງເລຂາ CCM ໄດ້ດຳເນີນການປະເມີນແບບ Light EPA ແລະ ກໍ່ໄດ້ອັບໂຫລດເອກະສານທີ່ກ່ຽວຂ້ອງທັງໝົດເຂົ້າໃນເວບໄຊທ໌ ຂອງກອງທຶນໂລກ ສຳເລັດແລ້ວ;

**ຄຳເຫັນຈາກກອງປະຊຸມ:**

- ກອງປະຊຸມໄດ້ຕົກລົງເຫັນດີຮັບຮອງເອົາຜົນການປະເມີນໃນການຈັດຕັ້ງປະຕິບັດຂອງ CCM ຕາມເງື່ອນຂອງກອງທຶນໂລກ (EPA) ແລະ ແຜນປັບປຸງ. ກອງປະຊຸມຍັງໄດ້ແນະນຳໃຫ້ປຶກສາຫາລືກັບກອງທຶນໂລກເພື່ອພິຈາລະນາເຫດຜົນຂອງຜົນໄດ້ຮັບຂອງການປະເມີນ EPA ກ່ຽວກັບຫຼັກຈັນຍາບັນຊຶ່ງເປັນຕົວຊີ້ວັດເພີ່ມເຂົ້າໃໝ່ທີ່ຍັງບໍ່ສາມາດບັນລຸຕົວຊີວັດໄດ້ນັ້ນ ໃຫ້ເລື່ອນໄປປະຕິບັດໃຫ້ບັນລຸຜົນ ໃນທ້າຍເດືອນມິຖຸນາ 2020;
- ເພື່ອຈັດຕັ້ງປະຕິບັດ ແລະ ບັນລຸຕົວຊີ້ວັດດ້ານຫຼັກຈັນຍາບັນ, ໃນກອງປະຊຸມ ກອງເລຂາ CCM ໄດ້ອະທິບາຍເພີ່ມເຕີມກ່ຽວກັບເນື້ອໃນທີ່ສຳຄັນຂອງຫຼັກຈັນຍາບັນຕໍ່ສະມາຊິກສົມບູນ ແລະ ສຳຮອງຂອງ CCM ແລະ ຜູ້ເຂົ້າຮ່ວມປະຊຸມ;
- ອາດຈະຂໍການແນະນຳເພີ່ມເຕີມ ແລະ ຂໍຜູ້ຊ່ວຍດ້ານວິຊາການ (TA) ຈາກກອງທຶນໂລກເພື່ອໃຫ້ມາຊ່ວຍໃນການກະກຽມ ແລະ ການຈັດຕັ້ງປະຕິບັດແຜນການປັບປຸງກ່ຽວກັບວຽກງານດ້ານຫຼັກຈັນຍາບັນ;
- ສຸດທ້າຍ, ກອງປະຊຸມໄດ້ເປັນເອກະພາບຮັບຮອງເອົາຜົນໄດ້ຮັບຂອງການປະເມີນໃນການຈັດຕັ້ງປະຕິບັດຂອງ CCM ຕາມເງື່ອນຂອງກອງທຶນໂລກ (EPA) ແລະ ແຜນປັບປຸງ.

**2. ປະເມີນການຈັດຕັ້ງປະຕິບັດວຽກງານປະຈຳປີໂດຍລວມຂອງ ກອງເລຂາ CCM**

ກອງເລຂາ CCM ໄດ້ແຈ້ງໃຫ້ກອງປະຊຸມກ່ຽວກັບການປະເມີນຜົນການປະຕິບັດວຽກງານກອງເລຂາ CCM ປະຈຳປີ ຊຶ່ງໄດ້ມີການປະເມີນຕົວຊີ້ວັດ 4 ຂໍ້ ດັ່ງນີ້:

1) ໃນໄລຍະ 12 ເດືອນຜ່ານມາ, 100% ຂອງວາລະກອງປະຊຸມ ແລະ ບົດບັນທຶກກອງປະຊຸມຂອງຄະນະກຳມະການປະສານງານກອງທຶນໂລກ (ຄະນະກຳມະການ ແລະ ຄະນະກອດກາ) ໄດ້ຖືກສົ່ງໃຫ້ສະມາຊິກສົມບູນ/ສຳຮອງ ຂອງຄະນະກຳມະການ CCM ແລະ ກອງເລຂາຂອງກອງທຶນໂລກ (ຜູ້ຈັດການກອງທຶນໂລກ, CCM Hub). ສຳລັບວາລະກອງປະຊຸມ ແມ່ນໄດ້ສົ່ງກ່ອນລ່ວງໜ້າເຈັດວັນ ແລະ ບົດບັນທຶກກອງປະຊຸມແມ່ນໄດ້ສົ່ງພາຍໃນເຈັດວັນພາຍຫຼັງກອງະຊຸມສຳເລັດລົງ.
2) ອີງຕາມເງື່ອນໄຂຂອງກອງທຶນໂລກ, ແຜນວຽກປະຈຳປີ ແລະ ບົດລາຍງານການເງິນຕ່າງໆ ຂອງ CCM ແມ່ນໄດ້ສົ່ງໃຫ້ກອງທຶນໂລກ (ຜູ້ຈັດການກອງທຶນໂລກ ແລະ CCM Hub) ພາຍໃນໜຶ່ງເດືອນພາຍຫຼັງສິ້ນສຸດສົກປີງົບປະມານ.
3) ໄດ້ລາຍງານຄວາມຄືບໜ້າໃນການຈັດຕັ້ງປະຕິບັດແຜນຂອງການປັບປຸງການຈັດຕັ້ງປະຕິບັດຕາມເງື່ອນໄຂຂອງກອງທຶນໂລກ (EPA) ແລະ ດັດແກ້ບັນຊີລາຍຊື່ພ້ອມດ້ວຍຂໍ້ມູນໃນການຕິດຕໍ່ພົວພັນຂອງສະມາຊິກ CCM ເມື່ອມີການປ່ຽນແປງ ຢ່າງນ້ອຍໃນທຸກໆສາມເດືອນ.

4) ກອງເລຂາ CCM ໄດ້ອຳນວຍຄວາມສະດວກໃນການແລກປ່ຽນຂໍ້ມູນ ແລະ ການປະສານງານ ລະຫວ່າງ ສະມາຊິກ CCM ແລະ ກອງເລຂາຂອງກອງທຶນໂລກ ລວມທັງ ຊ່ວຍອຳນວຍຄວາມສະດວກໃຫ້ແກ່ຜູ້ຈັດການ ແລະ ທີມງານກອງທຶນໂລກ ໃນເວລາທີ່ໄດ້ມາປະຕິບັດໜ້າທີ່ຢູ່ພາຍໃນປະເທດ.

**ຄຳເຫັນຈາກກອງປະຊຸມ:**

| ຕົວຊີ້ວັດ | ປະເມີນໂດຍ ຄະນະກຳມະການປະສານງານກອງທຶນໂລກ | | | | | |
|---|---|---|---|---|---|---|
| | ດີຫຼາຍ | ດີ | ມີບັນຫາໜ້ອຍໜຶ່ງ | ມີບັນຫາຫຼາຍ | ລວມ | ຄຳເຫັນ/ ຂໍ້ສະເໜີແນະ |
| 1 | 10 | 4 | 0 | 0 | 14 | ທຸກເອກະສານສ່ວນຫຼາຍເປັນພາສາອັງກິດ ບາງຄົນບໍ່ສາມາດອ່ານພາສາໄດ້ ເຮົາຈະມີວິທີແນວໃດເພື່ອປັບປຸງຫຼືແກ້ໄຂ?<br>ແມ່ນໄດ້ສົ່ງຜ່ານທາງເມວແລະວອດແອບ, ແມ່ນໄດ້ມີການປະສານງານໄດ້ດີ. |
| 2 | 3 | 10 | 1 | 0 | 14 | ບໍ່ໄດ້ຮັບຮູ້ໃນການລາຍງານ ເນື່ອງຈາກວ່າບໍ່ແມ່ນໜ້າທີ່. |
| 3 | 3 | 11 | 0 | 0 | 14 | ແມ່ນມີການລາຍງານຈະແຈ້ງ ລາຍລະອຽດຕ່າງໆ ທຸກໆຄັ້ງໃນກອງປະຊຸມ. ຂ້າພະເຈົ້າຮູ້ວ່າແມ່ນມີການລາຍງານຜ່ານ Portal, ແຕ່ເຖິງຢ່າງໃດ, CCM ບໍ່ໄດ້ຮັບລາຍງານຄວາມຄືບໜ້າ. |
| 4 | 8 | 4 | 1 | 1 | 14 | ເອກະສານທີ່ສົ່ງທາງເມວສ່ວນຫຼາຍເປັນພາສາອັງກິດ ບໍ່ເຂົ້າໃຈ ແລະ ໃນເວລາປະຊຸມມີເວລານ້ອຍ ບໍ່ສາມາດມີສ່ວນຮ່ວມໃນການອອກຄຳຄິດເຫັນບັນຫາຕ່າງໆຕາມຈຸດປະສົງ.<br>ສະພາບໃນປະຈຸບັນຍັງບໍ່ຈະແຈ້ງກ່ຽວກັບໂຄງການ HANSA (ການຮວມ WB-GF ເຂົ້າກັນ) ໃນໂຄງຮ່າງໃໝ່ຂອງ PMU ແລະ CCM. ການສົນທະນາ ແລະຍາດກ້າວຕໍ່ໄປຍັງບໍ່ແຈ້ງ. ສ່ວນອັນອື່ນແມ່ນດີ. |
| **ລວມ** | **24** | **29** | **2** | **1** | **56** | |
| **%** | **42.86** | **51.79** | **3.57** | **1.79** | **100** | |

3. **ທົບທວນແລະພິຈາລະນາເພື່ອຮັບຮອງເອົາຜົນການຄັດເລືອກຜູ້ຮັບທຶນຕົ້ນຕໍ (PR) ເພື່ອຈັດຕັ້ງປະຕິບັດທຶນຊ່ວຍເຫຼືອຈາກກອງທຶນໂລກຮອບໃໝ່ຂອງ 3 ແຜນງານ (ເອດ, ວັນນະໂລແລະໄຂ້ຍຸງ),ຊຶ່ງລວມມີການສະເໜີເຈດຈຳນົງຂອງ PR ປະຈຸບັນ ແລະ ເອກະສານທີ່ກ່ຽວຂ້ອງຕ່າງໆ** ຜູ້ຕາງໜ້າ PMU ໄດ້ນຳສະເໜີເອກະສານ EOI ແລະ ເອກະສານອື່ນໆທີ່ກ່ຽວຂ້ອງຂອງ PR ໃນປະຈຸບັນ ເພື່ອສະເໜີສືບຕໍ່ເປັນ PR ສຳລັບທຶນຊ່ວຍເຫຼືອໃນຮອບຕໍ່ໄປ 2021-2023:

**ຄຳເຫັນຈາກກອງປະຊຸມ:**

- ກອງປະຊຸມໄດ້ຕົກລົງເຫັນດີກັບ EOI ແລະ ເອກະສານອື່ນໆທີ່ກ່ຽວຂ້ອງ ທີ່ຜູ້ຕາງໜ້າ PR PMU ໄດ້ນຳສະເໜີມານັ້ນ. PR PMU ຍັງໄດ້ໃຫ້ຂໍ້ມູນເພີ່ມເຕີມກ່ຽວກັບປະສົບການຂອງຕົນທີ່ກ່ຽວຂ້ອງກັບການຕິດຕາມ ແລະ ປະເມີນຜົນ ທີ່ໄດ້ລະບຸໄວ້ໃນແບບຟອມການປະເມີນຄວາມສາມາດຂອງ PR;
- ນອກຈາກນີ້, ຫຼັງຈາກກອງປະຊຸມ OC ແລະ RMC ຄັ້ງວັນທີ 3 ກຸມພາ, ກອງເລຂາ CCM ໄດ້ແຈກຢາຍເຜີຍແຜ່ແບບຟອມການປະເມີນຜົນການຈັດຕັ້ງປະຕິບັດວຽກງານຂອງ PR ໃຫ້ບັນດາຄູ່ຮ່ວມງານທີ່ກ່ຽວຂ້ອງໂດຍຜ່ານກຸ່ມອີເມວ ແລະ WhatsApp ເພື່ອຂໍການທົບທວນ ແລະ ປະກອບຄຳເຫັນເພີ່ມເຕີມຈາກຄະນະກຳມະການ;
- ກົມແຜນການ ແລະ ການຮ່ວມມື (DPC) ຈະສືບຕໍ່ປຶກສາຫາລືກັບ WB ເພື່ອຮ່າງຄູ່ມືການດຳເນີນງານ ແລະ ໂຄງປະກອບການຈັດຕັ້ງປະຕິບັດຂອງໂຄງການຮ່ວມ GF ແລະ WB ສຳລັບໂຄງການ HANSA ເຊິ່ງຈະໃຫ້ສຳເລັດພາຍໃນເດືອນ ກໍລະກົດ ປີ 2020;
- ເຖິງແມ່ນວ່າ PR PMU ໃນປະຈຸບັນ ຈະໄດ້ລວມເຂົ້າກັບຫ້ອງການປະສານງານໂຄງການແຫ່ງຊາດຂອງ HANSA, PR ປັດຈຸບັນຍັງຈະຕ້ອງຮັບຜິດຊອບໃນການຄຸ້ມຄອງໂຄງການ RAI ແລະ ທຶນຊ່ວຍເຫຼືອອື່ນໆ. ຊື່ຂອງ PMU ທີ່ຈະຄຸ້ມຄອງໂຄງການຮ່ວມກັບໂຄງການ HANSA ແລະທຶນຊ່ວຍເຫຼືອລ້າອື່ນໆ ຂອງ GF ແມ່ນຈະໄດ້ມີການປຶກສາຫາລືຕື່ມລະຫວ່າງ DPC, WB ແລະ ຄູ່ຮ່ວມງານທີ່ສຳຄັນອື່ນໆ.
- ຜູ້ເຂົ້າຮ່ວມສ່ວນຫລາຍຄົນໄດ້ຕົກລົງເຫັນດີວ່າ PR ປັດຈຸບັນໄດ້ປະຕິບັດມາດຖານການຄັດເລືອກ PR ໂດຍອີງໃສ່ແນວທາງການຄັດເລືອກ PR ແລະ ການປະເມີນຜົນການປະຕິບັດ PR.
- ກອງປະຊຸມ CCM ໄດ້ເປັນເອກະພາບ ແລະ ຮັບຮອງເອົາ PR ໃນປະຈຸບັນໃຫ້ສືບຕໍ່ເປັນ PR ສຳລັບທຸກໆທຶນຊ່ວຍເຫຼືອຂອງກອງທຶນໂລກ (HIV, TB ແລະ ໄຂ້ຍຸງ) ໃນ ສປປ ລາວ ດ້ວຍການລົງຄະແນນສຽງແບບປິດລັບ.

4. **ບັນຫາອື່ນໆ**
   1. **ການສະເໜີຊື່ຜູ້ສະໝັກຈາກບັນດາປະເທດສະມາຊິກ ເພື່ອສະໝັກເລືອກຕັ້ງເປັນສະມາຊິກຂອງສາມຄະນະກຳມະການປະຈຳ ຂອງຄະນະກຳມະການບໍລິຫານງານກອງທຶນໂລກ**

      ຜູ້ຕາງໜ້າກົມຄວບຄຸມພະຍາດຕິດຕໍ່ (DCDC) ໃນນາມຜູ້ຕາງໜ້າຂອງ CCM ສປປ ລາວ ໃນເຂດເລືອກຕັ້ງຂອງພາກພື້ນປາຊີຟິກຕາເວັນຕົກ (WPR) ໄດ້ແຈ້ງຕໍ່ກອງປະຊຸມ ຊາບວ່າ: ເຂດເລືອກຕັ້ງພາກພື້ນປາຊີຟິກຕາເວັນຕົກ ໄດ້ເປີດຮັບຜູ້ສະໝັກຈາກບັນດາປະເທດສະມາຊິກ ເພື່ອໄປສະໝັກເລືອກຕັ້ງເປັນສະມາຊິກຂອງ 3 ຄະນະກຳມະການປະຈຳ ຂອງຄະນະກຳມະການບໍລິຫານກອງທຶນໂລກຄື: ຄະນະກຳມະການກວດສອບ-ການເງິນ, ຄະນະກຳມະການດ້ານຈັນຍາບັນ-ການປົກຄອງ ແລະ ຄະນະກຳມະການຍຸດທະສາດໄລຍະ 2020-2022.

**ຄຳເຫັນຈາກກອງປະຊຸມ:**

- ຜ່ານການສົນທະນາໃນກອງປະຊຸມ, ທ່ານ Eric Seastedt, ສະມາຊິກ CCM ທີ່ເປັນຕົວແທນຈາກພາກສ່ວນ ທີ່ບໍ່ສັງກັດລັດຖະບານໄດ້ສະແດງຄວາມສົນໃຈ ເພື່ອເຂົ້າເປັນຜູ້ສະໝັກ. ສະນັ້ນ, ກອງປະຊຸມໄດ້ຕົກລົງເຫັນດີສະເໜີ ທ່ານ Eric ເປັນຜູ້ສະໝັກຈາກ CCM ສປປ ລາວ.

   2. **ຜົນຂອງການລົງທຶນໃນໂຄງການເສີມສ້າງຄວາມເຂັ້ມແຂງດ້ານສາທາລະນະສຸກ (RSSH) ແລະ ການສະເໜີສືບຕໍ່ການລົງທຶນໃນໂຄງການ RSSH ສຳລັບທຶນຊ່ວຍເຫລືອຄັ້ງຕໍ່ໄປ.**

      ຜູ້ຕາງໜ້າກົມແຜນການ ແລະ ການຮ່ວມມື DPC ໄດ້ນຳສະເໜີໃນຂັ້ນເບື້ອງຕົ້ນກ່ຽວກັບໂຄງການ RSSH ສຳລັບປີ 2021 – 2023.

**ຄຳເຫັນຈາກກອງປະຊຸມ:**

- ຜ່ານການສົນທະນາໃນກອງປະຊຸມ, ການສະເໜີຂໍທຶນສຳລັບໂຄງການ RSSH ໃນຮອບປີ 2021 - 2023 ແມ່ນຍັງບໍ່ທັນໄດ້ຖືກຮັບຮັບຮອງ. ກອງປະຊຸມໄດ້ແນະນຳໃຫ້ບັນດາຜູ້ຮັບທຶນ ຍ່ອຍ (SRs) ໄປປຶກສາຫາລື ແລະ ເຮັດວຽກຮ່ວມກັນພາຍໃຕ້ການນຳພາຂອງ PR PMU ແລະ ປະສານງານກັບກອງທຶນໂລກວ່າ ງົບປະມານຈະມີການຈັດສັນຄືຮອບຜ່ານມາ ຫຼື ບໍ່. ຖ້າຍັງຈະສືບຕໍ່, ງົບປະມານແມ່ນໃຫ້ເອົາລວມເຂົ້າໃນໂຄງການອັນນະໂຣກ/ເອດ ຄືທີ່ຜ່ານມາບໍ່ ຫຼື ວ່າໃຫ້ເອົາເຂົ້າໃນໂຄງການ HANSA. ບັນຫານີ້ຍັງຈະຕ້ອງໄດ້ມີການປຶກສາຫາລືກັນໃຫ້ລະອຽດກ່ອນ, ຫຼັງຈາກນັ້ນຈຶ່ງສະເໜີຕໍ່ຄະນະກຳມະການ CCM ເພື່ອພິຈາລະນາ.

**III. ສະຫຼຸບສັງລວມບັນດາຈຸດສຳຄັນຂອງກອງປະຊຸມ:**

ກ່ອນຈະປິດກອງປະຊຸມ ທ່ານປະທານ ຄະນະກຳມະການປະສານງານກອງທຶນໂລກ ໄດ້ສະຫຼຸບປະເດັນສຳຄັນ ແລະ ໃຫ້ຄຳແນະນຳດັ່ງລຸ່ມນີ້:

1. ກອງປະຊຸມໄດ້ຮັບຮອງເອົາຜົນການປະເມີນໃນການຈັດຕັ້ງປະຕິບັດຂອງ CCM ຕາມເງື່ອນໄຂຂອງກອງທຶນໂລກ (EPA) ແລະ ແຜນປັບປຸງ;
2. ກອງປະຊຸມໄດ້ຕົກລົງເຫັນດີລົງຄະແນນສຽງແລະຮັບຮອງເອົາຜົນຂອງການຈັດຕັ້ງປະຕິບັດວຽກງານປະຈຳປີໂດຍລວມຂອງກອງເລຂາ CCM;
3. ກອງປະຊຸມໄດ້ຕົກລົງເຫັນດີເປັນເອກະສັນຮັບຮອງເອົາ PR ປັດຈຸບັນເພື່ອສືບຕໍ່ຮັບຜິດຊອບວຽກງານຄຸ້ມຄອງການຈັດຕັ້ງປະຕິບັດທຶນຊ່ວຍເຫລືອຂອງກອງທຶນໂລກຮອບໃໝ່ ທັງ 3 ໂຄງການ (ຕ້ານເອດ, ວັນນະໂລກ ແລະ ໄຂ້ຍຸງ) ໃນ ສປປ ລາວ. ເຖິງແມ່ນວ່າ PR PMU ປັດຈຸບັນ ຈະເຂົ້າລວມກັບຫ້ອງການປະສານງານຂອງໂຄງການ HANSA ແຕ່ PR PMU ປັດຈຸບັນຍັງຈະຕ້ອງໄດ້ມີຄວາມຮັບຜິດຊອບໃນການຄຸ້ມຄອງໂຄງການ RAI ແລະ ໂຄງການຊ່ວຍເຫຼືອຈາກກອງທຶນໂລກອື່ນໆ. PR ຈະເປັນຕົວແທນໃຫ້ກະຊວງສາທາລະນະສຸກເຮັດວຽກຮ່ວມກັບແຜນງານແຫ່ງຊາດ ແລະ UNOPS ເພື່ອກະກຽມບົດສະເໜີຂໍທຶນຮອບໃໝ່ ຊຶ່ງຈະຕ້ອງໄດ້ສົ່ງໃຫ້ກອງທຶນໂລກພາຍໃນ ເດືອນມີນາ 2020.
4. ກອງປະຊຸມໄດ້ເຫັນດີສະເໜີ ທ່ານ Eric Seastedt, ສະມາຊິກ CCM ທີ່ເປັນຕົວແທນຈາກພາກສ່ວນ ທີ່ບໍ່ສັງກັດລັດຖະບານ ເປັນຜູ້ສະໝັກຈາກ CCM ສປປ ລາວ ເພື່ອໄປສະໝັກເລືອກຕັ້ງເປັນສະມາຊິກຂອງຄະນະກຳມະການປະຈຳ ຂອງຄະນະກຳມະການບໍລິຫານກອງທຶນໂລກ;
5. ກອງປະຊຸມຍັງບໍ່ສາມາດໄດ້ຮັບຮອງເອົາບົດສະເໜີຂໍທຶນຊ່ວຍເຫຼືອຂອງໂຄງການເສີມສ້າງຄວາມເຂັ້ມແຂງດ້ານສາທາລະນະສຸກ RSSH (2021 2023). ກອງປະຊຸມໄດ້ແນະນຳໃຫ້ບັນດາຜູ້ຮັບທຶນ ຍ່ອຍ (SRs) ໄປປຶກສາຫາລື ແລະ ເຮັດວຽກຮ່ວມກັນພາຍໃຕ້ການນຳພາຂອງ PR PMU ແລະ ປະສານງານກັບກອງທຶນໂລກວ່າ ງົບປະມານຈະມີການຈັດສັນຄືຮອບຜ່ານມາ ຫຼື ບໍ່. ຖ້າຍັງຈະສືບຕໍ່, ງົບປະມານແມ່ນໃຫ້ເອົາລວມເຂົ້າໃນໂຄງການອັນນະໂຣກ/ເອດ ຄືທີ່ຜ່ານມາບໍ່ ຫຼື ວ່າໃຫ້ເອົາເຂົ້າໃນໂຄງການ HANSA. ບັນຫານີ້ ຍັງຈະຕ້ອງໄດ້ມີການປຶກສາຫາລືກັນໃຫ້ລະອຽດກ່ອນ, ຫຼັງຈາກນັ້ນຈຶ່ງສະເໜີຕໍ່ຄະນະກຳມະການ CCM ເພື່ອພິຈາລະນາ;
6. ແນະນຳໃຫ້ກອງເລຂາ CCM ປະສານງານກັບກອງທຶນໂລກ ເພື່ອຢັ້ງຢືນວ່າໂຄງຮ່າງການຈັດຕັ້ງຂອງສະມາຊິກ CCM ໃນປະຈຸບັນຈະໄດ້ສືບຕໍ່ໃນອານາຄົດ;
7. ແນະນຳໃຫ້ PR PMU DPC ສືບຕໍ່ຮ່າງໂຄງຮ່າງການຄຸ້ມຄອງໂຄງການຮ່ວມຂອງໂຄງການ HANSA ແລະກອງທຶນໂລກ ເພື່ອສະເໜີໃຫ້ການນຳກະຊວງສາທາລະນະສຸກ ແລະ ທະນາຄານໂລກ ພິຈາລະນາ. ພ້ອມກັນນັ້ນ,ກົນແຜນການແລະການຮ່ວມມື ຄວນພິຈາລະນາເພື່ອເຊື່ອມໂຍງວຽກງານຂອງ ທະນາຄານໂລກ, ຄະນະກຳມະການຊີ້ນຳໂຄງການ, ແຜນງານແຫ່ງຊາດ ແລະ ຜູ້ປະສານງານໂຄງການ ໂດຍໃຫ້ສອດຄ່ອງກັບລະບຽບການຂອງລັດຖະບານ ສປປ ລາວ ແລະ ສະເໜີໂຄງຮ່າງໃຫ້ການນຳ ກະຊວງສາທາລະນະສຸກເພື່ອພິຈາລະນາຕົກລົງວ່າຈະມີ Steering Committee ສະເພາະສຳລັບໂຄງການກອງທຶນໂລກ ແລະ ທະນາຄານໂລກ ຫຼື ບໍ່. ຈາກນັ້ນຈຶ່ງໃຫ້ PMU ສົ່ງໃຫ້ CCM ເພື່ອພິຈາລະນາ.

ກອງປະຊຸມຄັ້ງນີ້ ໄດ້ສໍາເລັດໃນເວລາ 17:00 ຂອງວັນທີ 06 ກຸມພາ 2020.

ນະຄອນຫຼວງວຽງຈັນ, ວັນທີ 19 ກຸມພາ 2020

**ປະທານກອງປະຊຸມ**

ທ່ານ ຮສ. ດຣ. ພຸທອນ ເມືອງປາກ
ຮອງລັດຖະມົນຕີກະຊວງສາທາລະນະສຸກ,
ປະທານຄະນະກໍາມະການປະສານງານກອງທຶນໂລກ

**ຜູ້ສັງລວມເນື້ອໃນກອງປະຊຸມ**

ທ່ານ ບຸດສາລີ ລັດຕະນະ
ຜູ້ປະສານງານ ແລະ ການເງິນ
ກອງເລຂາຄະນະກໍາມະການປະສານງານກອງທຶນໂລກ